ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
INEWS ຂ່າວ
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ທຫລ.ຊຂ ເຜີຍແຜ່ກົດໝາຍ
# ວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ




ໃນວັນທີ **05** ມີນາ **2020** ທະນາຄານແຫ່ງ ສປປ ລາວ ສາຂາ ພາກເໜືອ ແຂວງຊຽງຂວາງ (ທຫລ.ຊຂ) ໄດ້ຈັດກອງປະຊຸມເຜີຍແຜ່ກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ຂຶ້ນທີ່ຫ້ອງປະຊຸມໃຫຍ່ ຫ້ອງວ່າການປົກຄອງ ເມືອງແປກ ແຂວງຊຽງຂວາງ ໂດຍພາຍໃຕ້ການເປັນປະທານຂອງທ່ານ ວິສອນ ໄຊສີງຄາມ ຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາ ພາກເໜືອ ແຂວງ ຊຽງຂວາງ, ມີທ່ານ ກົງທະນູ ອຸ່ນສະຫວັນ ເລຂາພັກເມືອງ ເຈົ້າເມືອງ ເມືອງແປກ, ບັນດາຜູ້ຕາງໜ້າຈາກຫ້ອງການຕ່າງໆ, ບັນດາກຸ່ມບ້ານ, ນາຍບ້ານ ອ້ອມຂ້າງເມືອງແປກ ເຂົ້າຮ່ວມຫຼາຍກວ່າ 60 ທ່ານ.

ໃນພິທີ ທ່ານ ວິສອນ ໄຊສີງຄາມ ຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ໄດ້ມີຄຳຄິດເຫັນ, ໂອ້ລົມ ແລະ ກ່າວເປີດກອງປະຊຸມຢ່າງເປັນທາງການ ເຊິ່ງຈຸດປະສົງໃນການຈັດກອງປະຊຸມເຜີຍແຜ່ກົດໝາຍ ໃນຄັ້ງນີ້ ກໍ່ເພື່ອໃຫ້ບັນດາພະນັກງານຫ້ອງການຕ່າງໆ, ບັນດາກຸ່ມບ້ານ, ນາຍບ້ານ ອ້ອມຂ້າງເມືອງແປກໄດ້ເຊື່ອມຊຶມ, ເຂົ້າໃຈເຖິງລະບຽບ, ຫຼັກການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວ, ຄຸ້ມຄອງ, ຕິດຕາມກວດກາທຸລະກິດ ແລະ ທຸລະກຳເງິນຕາຕ່າງປະເທດ ເພື່ອໃຫ້ມີປະສິດທິພາບ-ປະສິດທິຜົນ, ຖືກຕ້ອງ ແນ່ໃສ່ຍົກສູງຄຸນຄ່າ ແລະ ສະເຖຍລະພາບ ຂອງເງິນຕາແຫ່ງຊາດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.



ຫຼັງຈາກນັ້ນ, ທ່ານ ວຽງວິໄລ ສຸດທິຈັກ ຫົວໜ້າພະແນກເສດຖະກິດ-ເງິນຕາ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ທຫລ.ຊຂ ໄດ້ຂຶ້ນບັນຍາຍກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ເຊິ່ງກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ທີ່ນຳມາເຜີຍແຜ່ໃນຄັ້ງນີ້ ປະກອບມີ IX ພາກ, 08 ໝວດ ແລະ 54 ມາດຕາ.




ໃນຕອນທ້າຍທ່ານປະທານກອງປະຊຸມຍັງໄດ້ເນັ້ນໜັກ ບັນດາຜູ້ເຂົ້າຮ່ວມກອງປະຊຸມໃຫ້ເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງ ໃນການຈັດຕັ້ງປະຕິບັດ ແລະ ເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ຢ່າງລວມສູນ ແລະ ເປັນເອກະພາບ ເພື່ອຮັບປະກັນສະເຖຍລະພາບເງິນຕາແຫ່ງຊາດ ໃຫ້ມີຄວາມໝັ້ນທ່ຽງ, ຊ່ວຍຊຸກຍູ້, ປຸກລະດົມ ໃຫ້ພໍ່ແມ່ປະຊາຊົນ ແລະ ການຈັດຕັ້ງທຸກພາກສ່ວນ ໃຫ້ການຮ່ວມມື ເຂົ້າຮ່ວມໃນການເຄື່ອນໄຫວ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ດ້ວຍການສ້າງຈິດສຳນຶກ ໃຫ້ສັງຄົມນຳໃຊ້ເງິນກີບ ແລະ ເງິນຕາຕ່າງປະເທດ ໃຫ້ຖືກຕ້ອງຕາມກົດໝາຍ ເພື່ອຫຼຸດຜ່ອນການນຳໃຊ້ເງິນຕາຕ່າງປະເທດເທື່ອລະກ້າວ.

**✍ ຂ່າວ + ພາບ: ສຸກສະຫວັນ ພົມມະວົງ**

ແລກປ່ຽນເງິນຕາຊະຊາຍ ຜິດກົດໝາຍລາວ